ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ມະຫາວິທະຍາໄລແຫ່ງຊາດ

**ຄະນະວິສະວະກໍາສາດ**

ເລກທີ....490.....ຄວສ

ວິທະຍາເຂດໂສກປ່າຫຼວງ, ວັນທີ...02...06-2022

# ໜັງສືແຈ້ງການ

**ເຖິງ :** ພະນັກງານ, ວິຊາການ ແລະ ຜູ້ທີ່ສົນໃຈເຂົ້າສຶກສາຕໍ່ລະດັບປະລິນຍາໂທທີ່ຄະນະວິສະວະກໍາສາດ, ມະຫາວິທະຍາໄລແຫ່ງຊາດ

**ເລື່ອງ:** ເປີດສອບເສັງຄັດເລືອກເອົານັກສຶກສາປະລິນຍາໂທວິສະວະກໍາສາດ ທາງດ້ານໄອທີ ສາຂາ ວິສະວະກໍາຊອບແວ ແລະ ສາຂາ ລະບົບເຄືອຂ່າຍຄອມພິວເຕີ ຮຸ່ນທີ XI.

ຄະນະບໍດີ ຄະນະວິສະວະກໍາສາດ ມະຫາວິທະຍາໄລແຫ່ງຊາດ ຂໍຖືເປັນກຽດຢ່າງສູງແຈ້ງມາຍັງທ່ານທີ່ສົນໃຈຢາກສຶກສາຕໍ່ລະດັບປະລິນຍາໂທຊາບວ່າ ຄະນະວິສະວະກໍາສາດ ມະຫາວິທະຍາໄລແຫ່ງຊາດ ຈະໄດ້ເປີດຮັບສະໝັກເອົາຜູ້ທີ່ມີຄວາມສົນໃຈເຂົ້າສຶກສາໃນຫຼັກສູດປະລິນຍາໂທວິສະວະກໍາສາດທາງດ້ານໄອທີ ສາຂາ ວິສະວະກໍາຊອບແວ ແລະ ສາຂາ ລະບົບເຄືອຂ່າຍຄອມພິວເຕີ ຮຸ່ນທີ 11 ສົກຮຽນ 2022-2023.

- ການຮຽນສໍາລັບວັນ ຈັນ - ສຸກ ເວລາ 17:30ໂມງ - 20:30ໂມງ ມີ 2 ສາຂາຄື: ສາຂາວິສະວະກໍາຊອບແວ ແລະ ສາຂາລະບົບເຄືອຂ່າຍຄອມພິວເຕີ
- ການຮຽນສໍາຫຼັບວັນ ສຸກ - ອາທິດ (ວັນສຸກເວລາ 17:30ໂມງ - 20:30ໂມງ ແລະ ວັນເສົາ - ອາທິດ 08:30 ໂມງ - 16:30 ໂມງ) ມີ 1 ສາຂາຄື: ສາຂາລະບົບເຄືອຂ່າຍຄອມພິວເຕີ

1. **ເງື່ອນໄຂຜູ້ສະໝັກເຂົ້າສອບເສັງ:**

ກ. ຈົບປະລິນຍາຕີ: ສາຂາເຕັກໂນໂລຊີຂໍ້ມູນຂ່າວສານ(ໄອທີ), ສາຂາວິສະວະກໍາຄອມພິວເຕີ, ສາຂາວິທະຍາສາດຄອມພິວເຕີ, ສາຂາເອເລັກໂຕນິກ, ສາຂາໂທລະຄົມມະນາຄົມ, ແລະ ສາຂາອື່ນໆທີ່ໃກ້ຄຽງ. ຊຶ່ງຜູ້ສະໝັກຕ້ອງມີຄວາມຮູ້ ແລະ ມີປະສົບການທາງດ້ານໄອທີມາແລ້ວ.

ຂ. ນັກສຶກສາທີ່ຈົບໃໝ່ທາກມີຜົນການສອບເສັງ GPA ≥ 3.00 ແລະ ມີໃບປະກາດແທ້ ແມ່ນສາມາດຍື່ນສອບເສັງໄດ້ເລີຍ, ສໍາລັບຜູ້ສະໝັກທີ່ມີຄະແນນ GPA ບໍ່ຮອດ 3.00 ຈະຕ້ອງມີປະສົບການເຮັດວຽກທີ່ກ່ຽວຂ້ອງໃນ ຂໍ້ (ກ) ຢ່າງໜ້ອຍເປັນໄລຍະເວລາ 2 ປີ.

2. **ເອກະສານຍື່ນສອບເສັງ**

ຕາມທີ່ໄດ້ແຈ້ງໄວ້ໃນຟອມເອກະສານສະໝັກສອບເສັງຄັດເລືອກເອົານັກສຶກສາປະລິຍາໂທວິສະວະກໍາສາດທາງດ້ານໄອທີ

3. **ໄລຍະເວລາຮັບຄໍາຮ້ອງ**

ເລີ່ມຕັ້ງແຕ່ວັນທີໄດ້ປະກາດ ເຖິງ ວັນທີ 8 ກໍລະກົດ 2022 ເວລາ 8:00 - 16:00 ໃນໂມງລັດຖະການ.

4. **ວັນສອບເສັງ**

ວັນເສົາ ວັນທີ 16 ກໍລະກົດ 2022 ວິຊາຄະນິດສາດ 8:30-9:30 ໂມງ, ວິຊາພາສາອັງກິດ 9:30 – 10:30 ໂມງ, ວິຊາພື້ນຖານໄອທີ 10:30-12:00 ໂມງ

5. **ສະຖານທີ່ຮັບຄໍາຮ້ອງ ແລະ ສອບເສັງ**

ຫ້ອງການພາກວິຊາວິສະວກໍາຄອມພິວເຕີ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ, ຄະນະວິສະວະກໍາສາດ, ມະຫາວິທະຍາໄລແຫ່ງຊາດ (ວິທະຍາເຂດໂສກປ່າຫຼວງ)

**ຕິດຕໍ່ສອບຖາມໄດ້ທີ່:**

ພາກວິຊາວິສະວະກໍາຄອມພິວເຕີ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ

ໂທ: 021 312198 , 021 350963

ອຈ. ປອ. ຄໍາເພັດ ບຸນນະດີ ໂທ: 020 22232288.

ປອ. ໄຊທະວີ ຫຼວງວິໄລ ໂທ: 020 22433250

ຄະນະບໍດີ

ຄະນະ ວິສະວະກໍາສາດ

**ຮສ.ປອ.ຄໍາຊຸຍ ສຸດທິສົມປັດ**